ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ ເລກທີ 234 /ຈທວ

ນະຄອນຫຼວງວຽງຈັນ, ວັນທີ 13.10.21.

# ແຈ້ງການ

ເຖິງ: ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ

ເລື່ອງ: ຍົກເລີກແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວຂອງວິສາຫະກິດ ຈຳນວນ 18 ຫົວໜ່ວຍ ຕາມໜັງສືສະເໜີຂອງກົມສ່ວຍສາອາກອນ ກະຊວງການເງິນ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ສະບັບເລກທີ 76/ຈທວ.ກທຄວ, ລົງວັນທີ 18 ມີນາ 2021;
- ອີງຕາມ ໜັງສືສະເໜີຂອງກົມສ່ວຍສາອາກອນ ກະຊວງການເງິນ ສະບັບເລກທີ 3131/ກສອ, ລົງວັນທີ 2 ກັນຍາ 2021, ເລກທີ 3435/ກສອ, ລົງວັນທີ 22 ກັນຍາ 2021 ແລະ ເລກທີ ເລກທີ 3569/ກສອ, ລົງວັນທີ 5 ຕຸລາ 2021

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ຊາບວ່າ:

1. ຍົກເລີກຜົນຂອງການແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຈຳນວນ 18 ຫົວໜ່ວຍ ທີ່ມີລາຍຊື່ຖືກມາດຕະການແຈ້ງໂຈະ (ໃນຈຳນວນ 618 ຫົວໜ່ວຍ) ຕາມໜັງສືແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ສະບັບເລກທີ 76/ຈທວ.ກທຄວ, ລົງວັນທີ 18 ມີນາ 2021 ເຫດຜົນຂອງການຍົກເລີກແຈ້ງໂຈະນັ້ນ ແມ່ນໄດ້ອີງຕາມໜັງສືສະເໜີຂອງກົມສ່ວຍສາອາກອນ ກະຊວງການເງິນ ສະບັບເລກທີ 3131/ກສອ, ລົງວັນທີ 2 ກັນຍາ 2021, ເລກທີ 3435/ກສອ, ລົງວັນທີ 22 ກັນຍາ 2021 ແລະ ເລກທີ ເລກທີ 3569/ກສອ, ລົງວັນທີ 5 ຕຸລາ 2021 ເຮັດໃຫ້ວິສາຫະກິດດັ່ງກ່າວສາມາດສືບຕໍ່ເຄື່ອນໄຫວໄດ້ໂດຍໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ນັບແຕ່ວັນທີ່ອອກແຈ້ງການສະບັບນີ້ ເປັນຕົ້ນໄປ;
2. ສຳລັບລາຍຊື່ວິສາຫະກິດ (ຈຳນວນ 600 ຫົວໜ່ວຍ) ແມ່ນຍັງມີຜົນຖືກມາດຕະການໂຈະການເຄື່ອນ ໄຫວທຸລະກິດຊົ່ວຄາວ ຕາມໜັງສືສະບັບເລກທີ 76/ຈທວ.ກທຄວ, ລົງວັນທີ 18 ມີນາ 2021 ແລະ ໃຫ້ສືບຕໍ່ເຂົ້າໄປພົວພັນກັບເຈົ້າໜ້າທີ່ສ່ວຍສາອາກອນ ກົມສ່ວຍສາອາກອນ ກະຊວງການເງິນ ເພື່ອປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງຂະແໜງສ່ວຍສາອາກອນ.
3. ລາຍຊື່ວິສາຫະກິດທີ່ສືບຕໍ່ໂຈະ ແລະ ຍົກເລີກໂຈະ ການເຄື່ອນໄຫວທຸລະກິດຊົ່ວຄາວ ສາມາດກວດສອບໄດ້ຕາມຄິວອາໂຄດ (QR Code) ຄັດຕິດແຈ້ງການສະບັບນີ້ ຫຼື ໂດຍຜ່ານເວັບໄຊ້ WWW.NED.MOIC.GOV.LA ຫຼື Facebook ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດ.

709 ຍັງຄ້າງ 12-10-2021

(ສືບຕໍ່ໂຈະຊົ່ວຄາວ)

709 ຍົກເລີກ 12-10-2021

(ຍົກເລີກໂຈະຊົ່ວຄາວ)

ເຈົ້າໜ້າທີ່ທະບຽນວິສາຫະກິດ

ສຸລິຄຳ ແຈ້ງສະຫວ່າງ

สแกนด้วย CamScanner